Washington State Department of Social & Health Services
*Transforming lives*

# ການລວມເຂົ້ານຳຊຸມຊົນ (Community Inclusion)



## ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ

### ການບໍລິການ Community Inclusion ແມ່ນຫຍັງ?

ການບໍລິການ Community Inclusion ແມ່ນການບໍລິການສ່ວນບຸກ ຄົນທີ່ຖືກເອົາໃຫ້ຢູ່ໃນສະພາບແວດລ້ອມຕາມຊຸມຊົນຢູ່ນຳບຸກຄົນອື່ນໆທີ່ບໍ່ມີ ຄວາມເສັຽອົງຄະ.ກິຈກັມໄດ້ຖືກອີງໃສ່ຄວາມສົນໃຈຂອງລູກຄ້າແລະເອົາໂອກາດ ໃຫ້ຊຶ່ງທົ່ວໄປແລ້ວຈະຖືກເກີດຂຶ້ນໂດຍສາທາຣະນາຊົນທົ່ວໄປທີ່ມີອາຍຸຄ້າຍ ຄຽງກັນຢູ່ໃນຊຸມນຸມຊົນທ້ອງຖິ່ນຂອງເຂົາເຈົ້າ,ທີ່ເຂົ້າເຖິງໄດ້ໂດຍທາງການ ເດີນທາງສາທາຣະນະຫລືການເດີນທາງໄປມາຕາມເໝາະສົມຈາກເຮືອນ ຂອງເຂົາເຈົ້າ.ຈຸດເປົ້າໝາຍຂອງການບໍລິການແມ່ນເພື່ອຈະອູ້ມຊູລູກຄ້າເພື່ອ ຈະເຂົ້າຮ່ວມ,ມີສ່ວນປະກອບແລະພັດທະນາຄວາມສັມພັນນຳສະມາຊິກຊຸມຊົນ ຜູ້ທີ່ບໍ່ແມ່ນພະນັກງານທີ່ຖືກຈ່າຍເງິນໃຫ້.

### ແມ່ນໃຜມີເງື່ອນໄຂໄດ້ຮັບການບໍລິການ Community Inclusion?

Community Inclusion ມີໄວ້ໃຫ້ແກ່ລູກຄ້າຜູ້ທີ່ໄດ້ເຂົ້າຮ່ວມໃນການບໍລິການວຽກງານເກົ້າເດືອນແລະໄດ້ເລືອກເອົາ Community Inclusion ເພີ້ມເຕີມໃສ່ຫລືແທນທີ່ວຽກງານ. Community Inclusion ຍັງມີໄວ້ໃຫ້ອີກຄືກັນໃຫ້ແກ່ລູກຄ້າອາຍຸ 62 ປີຫລືແກ່ກວ່າໂດຍບໍ່ຕ້ອງໄດ້ເຂົ້າຮ່ວມນຳເກົ້າເດືອນໃນການບໍລິ ການວຽກງານ.ມັນມີໄວ້ໃຫ້ສຳລັບລູກຄ້າຜູ້ທີ່ຢູ່ໃນການສະລະສິດ Basic Plus ແລະ Core; ລູກຄ້າຜູ້ທີ່ກຳລັງໄດ້ຮັບ Roads to Community Living, ລູກຄ້າຂອງ Pre-Admission Screening and Resident Review,ແລະລູກຄ້າຢູ່ Skilled Nursing Facilities, ແລະ Residential Habilitation Centers.ການຍົກເວັ້ນຕໍ່ກົດຣະບຽບສາມາດຖືກຮ້ອງຂໍເອົາໄດ້ຜ່ານຜູ້ຈັດການເອກສານຂອງທ່ານຖ້າຫາກວ່າທ່ານບໍ່ມີຫລືບໍ່ຢາກເຂົ້າຮ່ວມນຳໃນການບໍລິການວຽກງານ 9 ເດືອນ. [WAC 388-845-0603](WAC 388-845-0603) ແມ່ນໃຜແດ່ມີເງື່ອນໄຂໄດ້ຮັບການບໍລິການ Community Inclusion?

### ຂ້ອຍສາມາດໄດ້ຮັບ Community Inclusion ແລະການບໍລິການວຽກ ງານໃນເວລາດຽວກັນບໍ່?

ໄດ້,ເລີ້ມຕົ້ນຕັ້ງແຕ່ Jan. 1, 2023, ການບໍລິການເຫລົ່ານີ້ຈະມີໄວ້ໃຫ້ຕະລອດໄປຫລັງຈາກທີ່ລູກຄ້າເຂົ້າຮ່ວມ ໃນການບໍລິການ ວຽກ ງານເກົ້າເດືອນ.

### ຊົ່ວໂມງຂູ້ມຊູຈັກຊົ່ວໂມງທີ່ຂ້ອຍຈະໄດ້ຮັບໃນ Community Inclusion?

ຊົ່ວໂມງການບໍລິການ Community Inclusion ປະຈຳເດືອນຂອງທ່ານໄດ້ຖືກພິຈາຣະນາເບິ່ງໂດຍການປະເມີນຜົນປະຈຳປີຂອງທ່ານທີ່ຖືກເຮັດໂດຍຜູ້ຈັດການເອກສານຂອງທ່ານຈາກ Developmental Disabilities Administration. ຊົ່ວໂມງການບໍລິ ການປະຈຳເດືອນຫ່າງກັນຈາກສາມຫາ 20. [WAC 388-828-9310](WAC 388-828-9310) DDA ພິຈາຣະນາເບິ່ງຈຳນວນຊົ່ວໂມງການບໍລິການ Community Inclusion ທີ່ທ່ານຈະໄດ້ຮັບແຕ່ລະເດືອນແນວໃດ?

### ຂ້ອຍຈະສາມາດຄາດຫວັງແມ່ນຫຍັງແດ່ ຈາກການບໍລິການ Community Inclusion ຂອງຂ້ອຍ?

ຜູ້ບໍລິການ Community Inclusion ຂອງທ່ານຈະພົບກັບທ່ານແລະຜ່ານການດຳເນີນການວາງແຜນມຸ່ງໃສ່ສູນກາງ ບຸກຄົນຈະຊີ້ບອກຄວາມສົນໃຈສ່ວນບຸກຄົນຂອງທ່ານເພື່ອຈະອອກແບບແຜນການ Community Inclusion ດ້ວຍຍຸດທະວິທີເພື່ອຈະເຂົ້າຫາໂອກາດທີ່ສອດ ຄ່ອງນຳຄວາມສົນໃຈຂອງທ່ານຢູ່ໃນຊຸມຊົນທ້ອງຖິ່ນຂອງທ່ານ.ກິຈກັມຈະຖືກ ລວມເຂົ້າໃສ່ກັນແລະເອົາໂອກາດໃຫ້ເພື່ອຈະມີສ່ວນຮ່ວມແລະພັດທະນາ ຄວາມສັມພັນນຳບຸກຄົນຢູ່ໃນຊຸມຊົນຂອງທ່ານຜູ້ທີ່ບໍ່ແມ່ນພະນັກງານທີ່ ຖືກຈ່າຍເງິນໃຫ້.

## ຂ້ອຍຈະມີພະນັກງານຢູ່ນຳຂ້ອຍເລື້ອຍໆບໍ່ຢູ່ໃນຊຸມຊົນ?

ທ່ານຈະມີການອູ້ມຊູທີ່ເຫມາະສົມຢູ່ເລື້ອຍໆເພື່ອຈະເຂົ້າຮ່ວມຢ່າງປອດພັຍໃນກິຈກັມຊຸມຊົນ;ເຖິງຢ່າງໃດກໍຕາມ, ພະນັກງານ Community Inclusion ຂອງທ່ານຈະບໍ່ໄດ້ຢູ່ນຳຢູ່ເລື້ອຍໆ.ຜົນອອກມາຂອງການບໍຣິການທີ່ຢາກໄດ້ແມ່ນວ່າທ່ານຖືກອູ້ມຊູເພື່ອຈະເຂົ້າຮ່ວມນຳ,ມີສ່ວນແບ່ງປັນແລະພັດທະນາຄວາມສັມພັນຂອງເຂົາເຈົ້ານຳສະມາຊິກຊຸມຊົນຄົນອື່ນຜູ້ທີ່ມີຄວາມສົນໃຈຄ່າຍຄືກັນຜູ້ທີ່ຈະອູ້ມຊູທ່ານໃນກິຈກັມເພື່ອວ່າພະນັກງານ Community Inclusion ສາມາດຈືດຈາງຈາກກິຈກັມນັ້ນແລະຊອກຫາໂອກາດເພີ້ມເຕີມສຳລັບທ່ານເພື່ອຈະເຂົ້າຮ່ວມນຳໃນກິຈກັມຊຸມຊົນຂອງຄວາມສົນໃຈ.

## ຖ້າຫາກວ່າຂ້ອຍບໍ່ຮູ້ຈັກດວ່າແມ່ນຫຍັງຂ້ອຍຢາກຈະເຮັດຢູ່ໃນຊຸມຊົນ?

ຜູ້ບໍຣິການ Community Inclusion ຂອງທ່ານໄດ້ຖືກຝຶກຝົນມາເພື່ອຈະ ຊ່ວຍເຫລືອທ່ານຊີ້ບອກຈຳພວກທີ່ສົນໃຈຜ່ານການດຳເນີນການພົບພໍ້ບ່ອນທີ່ທ່ານໄດ້ຖືກເອົາໂອກາດຫລາຍໆຢ່າງໃຫ້ຢູ່ຕາມຊຸມຊົນເພື່ອຈະເບິ່ງວ່າແມ່ນຫຍັງທີ່ທ່ານມັກຫລາຍທີ່ສຸດຫລືສະແດງຄວາມສົນໃຈນຳ,ເຂົາເຈົ້າຈະຊອກເອົາຄວາມເຫັນຈາກຜູ້ທີ່ຮູ້ຈັກທ່ານດີທີ່ສຸດ.

## ກິຈກັມແນວໃດແດ່ທີ່ມີໄວ້ໃຫ້ເພື່ອຈະ ເຂົ້າຮ່ວມນຳວ່າເປັນສ່ວນນຶ່ງຂອງການບໍຣິການ **Community Inclusion?**

ກິຈກັມຊຸມຊົນແມ່ນແຕກຕ່າງກັນໄປຕາມຄວາມສົນໃຈຂອງທ່ານ (ຕົວຢ່າງການເປັນສະມາຊິກຂອງສະໂມສອນ, ການອາສາສະມັກ,ອື່ນໆ) ຖ້າຫາກວ່າເຂົາເຈົ້າສອດຄ່ອງນຳກົດເກນງ່າຍໆສີ່ຢ່າງທັງຫມົດ:

1. ເປັນສ່ວນບຸກຄົນໂດຍອີງຕາມຄວາມສົນໃຈຂອງທ່ານ.
2. ປະສົມປະສານນຳບຸກຄົນອື່ນໆທີ່ບໍ່ມີຄວາມເສັຽອົງຄະຢູ່ໃນຊຸມຊົນ.
3. ກິຈກັມຊຶ່ງທົ່ວໄປແລ້ວຈະຖືກເກີດຂື້ນໂດຍສາທາຣະນາຊົນທົ່ວໄປທີ່ມີ ອາຍຸຄ້າຍຄຽງກັນຢູ່ໃນຊຸມນຸມຊົນທ້ອງຖິ່ນຂອງທ່ານ,ທີ່ເຂົ້າເຖິງໄດ້ໂດຍທາງການເດີນທາງສາທາຣະນະຫລືການເດີນທາງທີ່ເຫມາະສົມຈາກເຮືອນຂອງທ່ານ.
4. ຄວາມສາມາດທີ່ຈະມີສ່ວນປະກອບແລະພັດທະນາຄວາມສັມພັນນຳສະມາຊິກຊຸມຊົນຜູ້ທີ່ບໍ່ແມ່ນພະນັກງານທີ່ຖືກຈ່າຍເງິນໃຫ້.

## ກິຈກັມແນວໃດແດ່ທີ່ ບໍ່ມີ ໄວ້ໃຫ້ເພື່ອຈະເຂົ້າຮ່ວມນຳໃຫ້ເປັນພາກສ່ວນນຶ່ງຂອງການບໍຣິການ **Community Inclusion?**

ການບໍຣິການ Community Inclusion ບໍ່ສາມາດຖືກໃຊ້ເພື່ອຈະອູ້ມຊູທ່ານຢູ່ໃນກິຈກັມຊຸມຊົນບາງຢ່າງ. ກິຈກັມເຫລົ່ານີ້ລວມເອົາ:ກິຈກັມພິເສດແລະ/ຫລືແຍກອອກຈາກກັນນຳລູກຄ້າຜູ້ທີ່ມີຄວາມເສັຽອົງຄະເທົ່ານັ້ນ,ກິຈກັມທີ່ບໍ່ໃຫ້ໂອກາດເພື່ອຈະມີສ່ວນຮ່ວມຫລື ພັດທະນາຄວາມສັມພັນນຳສະມາຊິກຊຸມຊົນຜູ້ທີ່ບໍ່ແມ່ນພະນັກງານທີ່ບໍ່ຖືກຈ່າຍເງິນໃຫ້,ຫລືກິຈກັມທີ່ບໍ່ໄດ້ເກີດຂື້ນຢູ່ໃນຊຸມຊົນທ້ອງຖິ່ນຂອງທ່ານ.

## ການບໍຣິການ **Community Inclusion** ສາມາດຖືກເອົາໃຫ້ຫລາຍກວ່າຄົນນຶ່ງໃນເວລາດຽວກັນບໍ່?

ເຖິງແມ່ນວ່າ Community Inclusion ຈະແມ່ນການບໍຣິການ ສ່ວນບຸກຄົນ, ມັນສາມາດຖືກເອົາໃຫ້ສຳລັບລູກຄ້າສອງຫາສາມຄົນໃນເວລາ ດຽວກັນ;ຖ້າຫາກວ່າກິຈກັມແມ່ນຜົນປະໂຍດຮ່ວມກັນຂອງຜູ້ເຂົ້າຮ່ວມທຸກໆ ຄົນແລະສົດຄ່ອງນຳກົດຣະບຽບຂອງສະພາບແວດລ້ອມຢູ່ນຳກັນ,ຊຸມຊົນ ທ້ອງຖິ່ນ,ແລະຄວາມສາມາດທີ່ຈະມີສ່ວນແບ່ງຊ່ວຍແລະພັດທະນາຄວາມ ສັມພັນນຳບຸກຄົນອື່ນຜູ້ທີ່ບໍ່ມີຄວາມເສັຽອົງຄະຢູ່ໃນຊຸມຊົນຜູ້ທີ່ບໍ່ແມ່ນພະ ນັກງານທີ່ຖືກຈ່າຍເງິນໃຫ້.

## ການບໍຣິການແນວອື່ນແນວໃດແດ່ທີ່ ມີໄວ້ໃຫ້ເພື່ອຈະຊ່ວຍເຫລືອຂ້ອຍເຂົ້າຫາຊຸມຊົນຂອງຂ້ອຍ?

Community Engagement ແມ່ນການບໍຣິການທີ່ຊ່ວຍເຫລືອລູກຄ້າໃຫ້ເຂົ້າຫາຊຸມຊົນຂອງເຂົາເຈົ້າແລະມີໄວ້ໃຫ້ແກ່ລູກຄ້າຢູ່ໃນ Individual and Family Services, ການສະລະສົດ Basic Plus ແລະ Core ຫລືລູກຄ້າ Pre-Admission Screening and Resident Review ຢູ່ໃນ Skilled Nursing Facilities ຫລື Roads to Community Living. ມັນຈະຖືກເອົາໃຫ້ໂດຍຜູ້ບໍຣິການສ່ວນບຸກຄົນແລະຫລືຫ້ອງການທີ່ມີສັນຍາໂດຍກົງນຳ Developmental Disabilities Administration. Respite ສາມາດຖືກເອົາໃຫ້ໄດ້ອີກຄືກັນຢູ່ຕາມຊຸມຊົນ. ມັນອາດຈະມີໄວ້ໃຫ້ແກ່ລູກຄ້າຢູ່ໃນ Individual and Family Services, ການສະລະສົດ Basic Plus and Core ມັນຈະຖືກເອົາໃຫ້ໂດຍຜູ້ບໍຣິການສ່ວນບຸກຄົນແລະ/ຫລືຫ້ອງການບ່ອນທີ່ມີສັນຍາໂດຍກົງນຳ DSHS' Developmental Disabilities Administration.